**ວັນອາທິດສະຫລອງພຣະຕຣີເອກະນຸພາບ**

**ວັນທີ 7 ມິຖຸນາ 2020**



**ພຣະວໍລະສານໂດຍນັກບຸນຢວງ 3, 16-18**

ໃນເວລານັ້ນ, ພຣະເຢຊູເຈົ້າກ່າວກັບນີໂກແດມວ່າ: "ພຣະເຈົ້າຊົງຮັກມະນຸດຢ່າງເຫລືອລົ້ນຈົນໄດ້ປະທານພຣະເອກະບຸດມາຊ່ວຍທຸກຄົນທີ່ເຊື່ອໃນພຣະອົງບໍ່ໃຫ້ພິນາດຈິບຫາຍ ແຕ່ໃຫ້ໄດ້ຊີວິດນິລັນດອນ. ຍ້ອນວ່າພຣະເຈົ້າບໍ່ໄດ້ຊົງໃຊ້ພຣະບຸດມາພິພາກສາໂລກ ແຕ່ມາຊ່ວຍໃຫ້ໂລກໄດ້ຮອດດ້ວຍອາໄສພຣະບຸດນັ້ນ. ຜູ້ໃດເຊື່ອເຖິງພຣະບຸດຈະບໍ່ຖືກພິພາກສາ. ສ່ວນຜູ້ທີ່ບໍ່ເຊື່ອນັ້ນໄດ້ຖືກພິພາກສາໂທດແລ້ວ ຍ້ອນວ່າເຂົາບໍ່ເຊື່ອເຖິງພຣະນາມຂອງພຣະເອກະບຸດຂອງພຣະເຈົ້າ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢງ 3, 16-18**

ວັນອາທິດທີ່ຜ່ານມາພຣະກຣິສຕະຈັກໄດ້ສະຫລອງພຣະຈິດເຈົ້າສະເດັດລົງມາ. ສ່ວນວັນອາທິດນີ້ແມ່ນວັນສະຫລອງພຣະຕຣີເອກະນຸພາບ, ພຣະເຈົ້າດຽວແຕ່ເປັນສາມພຣະອົງ: ພຣະບິດາ, ພຣະບຸດ ແລະພຣະຈິດ.

ວາຈາພຣະເຈົ້າວັນນີ້ແມ່ນຢູ່ໃນບໍລິບົດຂອງການສົນທະນາລະຫວ່າງພຣະເຢຊູເຈົ້າກັບຟາຣີເຊວຜູ້ໜຶ່ງຊື່ວ່ານີໂກແດມ. ໃນຄຳສົນທະນານີ້ມີສອງຫົວຂໍ້ຄື: ຫົວຂໍ້ທີໜຶ່ງ: ບໍ່ມີໃຜສາມາດເຂົ້າໃນອານາຈັກສະຫວັນໄດ້ຖ້າເຂົາບໍ່ໄດ້ເກີດໃໝ່ຈາກນ້ຳແລະພຣະຈິດເຈົ້າ. ສ່ວນຫົວຂໍ້ທີສອງແມ່ນວາຈາພຣະເຈົ້າທີ່ພວກເຮົາໄດ້ຟັງວັນນີ້ຄື: ບໍ່ມີໃຜຮູ້ຈັກເລື່ອງອານາຈັກສະຫວັນໄດ້ຍົກເວັ້ນຜູ້ທີ່ໄດ້ລົງມາຈາກສະຫວັນຄືພຣະເຢຊູກຣິສໂຕເຈົ້າ. ແຕ່ພຣະເຢຊູເຈົ້າລົງມາຈາກສະຫວັນເພື່ອຈຸດປະສົງອັນໃດ? ພຣະວໍລະສານບອກພວກເຮົາວ່າ ພຣະອົງລົງມາຈາກສະຫວັນບໍ່ແມ່ນເພື່ອຕັດສິນໂລກ, ແຕ່ເພື່ອໃຫ້ທຸກຄົນທີ່ເຫັນແລະເຊື່ອໃນພຣະອົງໄດ້ຮັບຊີວິດນິລັນດອນ. ສ່ວນຜູ້ທີ່ບໍ່ເຊື່ອໃນພຣະອົງ ຜູ້ນັ້ນໄດ້ຖືກຕັດສິນແລ້ວເພາະເຂົາບໍ່ໄດ້ຮັບຊີວິດນິລັນດອນ.

ວາຈາພຣະເຈົ້າຕອນນີ້ມີຄວາມກ່ຽວພັນຫຍັງກັບວັນສະຫລອງພຣະຕຣີເອກະນຸພາບ, ພຣະເຈົ້າດຽວເປັນສາມພຣະອົງ? ແນ່ນອນ, ທຳລ້ຳເລິກແຫ່ງພຣະຕຣີເອກະນຸພາບບໍ່ແມ່ນເລື່ອງທີ່ມະນຸດສາມາດເຂົ້າໃຈໄດ້. ດັ່ງນັ້ນ, ມະນຸດຈຶ່ງຕ້ອງອາໄສຄວາມເຊື່ອເພື່ອຈະສາມາດຫຍັບເຂົ້າໃກ້ກັບພຣະເຈົ້າ. ຄວາມເຊື່ອນີ້ແມ່ນຫຍັງ? ຄວາມເຊື່ອແມ່ນພຣະຄຸນຂອງພຣະເຈົ້າ. ແລະຜູ້ທີ່ໄດ້ຮັບພຣະຄຸນນີ້ກ່ອນພວກເຮົາຄືບັນດາອັກຄະສາວົກຜູ້ຊຶ່ງໄດ້ຢູ່ໄດ້ກິນກັບພຣະອົງ, ຜູ້ຊຶ່ງໄດ້ຟັງແລະໄດ້ເຫັນພຣະເຢຊູເຈົ້າເທດສອນແລະທຳອັດສະຈັນຕ່າງໆນາໆ. ເມື່ອພວກອັກຄະສາວົກຖ່າຍທອດປະສົບການຊີວິດທີ່ພວກເຂົາມີຮ່ວມກັບພຣະເຢຊູເຈົ້າໃຫ້ພວກເຮົາແລ້ວ. ພວກເຮົາກໍມີໜ້າທີ່ຖ່າຍທອດປະສົບການຊີວິດຄວາມເຊື່ອນີ້ໃຫ້ຄົນອື່ນໄດ້ຮູ້ຈັກແລະເຊື່ອສືບຕໍ່ໄປ. ຄຳຖາມທີ່ຕາມມາກໍຄື ແກ່ນສານຂອງຄວາມເຊື່ອແມ່ນຫຍັງ? ແກ່ນສານຂອງຄວາມເຊື່ອນີ້ແມ່ນ: ພຣະເຢຊູຜູ້ເປັນພຣະບຸດຂອງພຣະບິດາເຈົ້າໄດ້ຖືກສົ່ງມາໃນໂລກເພື່ອໄຖ່ໂລກໃຫ້ຮອດດ້ວຍການທໍລະມານ ,ຕາຍແລະການກັບເປັນຄືນມາຂອງພຣະອົງ.

ວາຈາພຣະເຈົ້າວັນນີ້ສອນພວກເຮົາຫຍັງກ່ຽວກັບພຣະຕຣີເອກະນຸພາບ? ວາຈາພຣະເຈົ້າວັນນີ້ສອນພວກເຮົາວ່າ: ຜູ້ໃດເຊື່ອໃນພຣະເຢຊູເຈົ້າ, ກໍເຊື່ອໃນຜູ້ທີ່ສົ່ງພຣະອົງມາຄືພຣະບິດາ. ສ່ວນພຣະຈິດເຈົ້າແມ່ນຜູ້ທີ່ທຳໃຫ້ຄວາມເຊື່ອຂອງພວກເຮົາເຕີບໃຫຍ່ແລະໝັ້ນຄົງໃນພຣະບິດາແລະພຣະບຸດ.

ໂອພຣະເຈົ້າ, ທຸກຄັ້ງທີ່ລູກທຳໝາຍສຳຄັນກາງເຂນ ໂຜດໃຫ້ລູກໄດ້ເຊື່ອໃນພຣະບິດາຜູ້ໄດ້ສົ່ງພຣະບຸດຂອງພຣະອົງລົງມາໃນໂລກເພື່ອຊ່ວຍໂລກໃຫ້ຮອດ. ແລະໂຜດໃຫ້ລູກໄດ້ເຊື່ອໃນພຣະຈິດຜູ້ປະທານພຣະຄຸນແຫ່ງຄວາມເຊື່ອໃຫ້ລູກ ເພື່ອລູກຈະໄດ້ດຳເນີນຊີວິດເປັນກຣິສຕັງທີ່ດີນັ້ນເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ